JDB

ທະນາຄານຮ່ວມພັດທະນາ ມະຫາຊົນ

Joint Development Bank Public

# ເອກະສານລາຍງານການເງິນ (ກ່ອນການກວດສອບ)

## ສຳລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2026



**ເອກະສານລາຍງານການເງິນ (ກ່ອນການກວດສອບ)**
**ສໍາລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2026**

| **ສາລະບານ** | **ໜ້າ** |
|---|---|
| ຂໍ້ມູນທົ່ວໄປ | 1 - 2 |
| ໃບລາຍງານຜົນໄດ້ຮັບ | 3 |
| ໃບລາຍງານຖານະການເງິນ | 4 - 5 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 6 |
| ໃບລາຍງານກະແສເງິນສົດ | 7 - 8 |
| ບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນໂດຍຫຍໍ້ | 9 - 18 |

## ຂໍ້ມູນທົ່ວໄປ

**ທະນາຄານ**

ທະນາຄານຮ່ວມພັດທະນາ ມະຫາຊົນ ("ທະນາຄານ") ແມ່ນທະນາຄານເອກະຊົນຈຳກັດ ທີ່ໄດ້ດຳເນີນງານ ແລະ ຈົດທະບຽນຢູ່ ໃນ ສປປ ລາວ.

ທະນາຄານໄດ້ສ້າງຕັ້ງຂຶ້ນພາຍໃຕ້ສັນຍາຮ່ວມລົງທຶນ ລົງວັນທີ 2 ກຸມພາ 1989 ລະຫວ່າງທະນາຄານ ແຫ່ງ ສປປ ລາວ ("ທຫລ") ແລະ ບໍລິສັດ ພົມສຸວັນ ໄຊໂລ ແລະ ອິບພຶດ ຈຳກັດ, ເຊິ່ງເປັນບໍລິສັດຢູ່ປະເທດໄທ. ພາຍໃຕ້ຂໍ້ຕົກລົງ, ບໍລິສັດ ພົມສຸວັນ ໄຊໂລ ແລະ ອິບພຶດ ຈຳກັດ ແມ່ນຖືຮຸ້ນ 70% ແລະ ທຫລ ແມ່ນ 30% ຕາມລຳດັບ. ໃນປີ 2010, ທຫລ ໄດ້ໂອນທຶນປະກອບທັງໝົດໃຫ້ແກ່ ບໍລິສັດ ພົມສຸວັນ ໄຊໂລ ແລະ ອິບພຶດ ຈຳກັດ ແລະ ຫຼັງຈາກນັ້ນໃນປີ 2012, ບໍລິສັດ ພົມສຸວັນ ໄຊໂລ ແລະ ອິບພຶດ ຈຳກັດ ໄດ້ຂາຍຮຸ້ນທັງ 100% ໃຫ້ແກ່ ນັກລົງທຶນພາຍໃນ.

ທະນາຄານດຳເນີນທຸລະກິດພາຍໃຕ້ຂໍ້ຕົກລົງ ເລກທີ 04/PMA ອອກໂດຍປະທານຫ້ອງວ່າການລັດຖະມົນຕີ ແລະ ຂໍ້ຕົກລົງ ເລກທີ 04/ທຫລ ລົງວັນທີ 21 ມັງກອນ 1989, ເຊິ່ງຖືກດັດແກ້ໂດຍ ໃບອະນຸຍາດລົງທຶນ ເລກທີ 133/10 ລົງວັນທີ 23 ກັນຍາ 2010 ອອກໂດຍກະຊວງແຜນການ ແລະ ການລົງທຶນ ແລະ ພາຍໃຕ້ໃບທະບຽນວິສະຫະກິດ 0234/ທລທ ລົງວັນທີ 3 ພຶດສະພາ 2013 ເຊິ່ງອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ກິດຈະກຳຫຼັກຂອງທະນາຄານແມ່ນໃຫ້ບໍລິການທາງດ້ານ: ການລະດົມທຶນ ແລະ ການຮັບຝາກເງິນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຈາກບັນດາອົງການຈັດຕັ້ງ ແລະ ບຸກຄົນຕ່າງໆ; ການປ່ອຍກູ້ໄລຍະສັ້ນ,ໄລຍະກາງ ແລະ ໄລຍະຍາວໃຫ້ແກ່ອົງການຈັດຕັ້ງ ແລະ ບຸກຄົນທົ່ວໄປ ອີງຕາມເນື້ອໃນ ແລະ ຄວາມອາດສາມາດຂອງແຫຼ່ງເງິນທຶນຂອງທະນາຄານ; ການເຮັດທຸລະກຳເງິນຕາຕ່າງປະເທດ; ບໍລິການດ້ານການເງິນລະຫວ່າງປະເທດ; ສ່ວນຫຼຸດໃບຢັ້ງຢືນການຄ້າ, ພັນທະບັດ ແລະ ເອກະສານທີ່ມີມູນຄ່າຕ່າງໆ; ໃຫ້ບໍລິການອື່ນໆດ້ານການທະນາຄານຕາມທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

ທຶນຈົດທະບຽນ

ທຶນຈົດທະບຽນຂອງທະນາຄານ ໃນໄລຍະວັນທີ 31 ມີນາ 2026 ແມ່ນ 750,000 ລ້ານກີບ.

**ສະພາບໍລິຫານ**

ສະມາຊິກສະພາບໍລິຫານຂອງທະນາຄານ ພາຍໃນໄລຍະທີ່ສິ້ນສຸດວັນທີ 31 ມີນາ 2026 ແລະ ໃນວັນທີ ທີ່ອອກບົດລາຍງານສະບັບນີ້ ປະກອບມີ:

| ຊື່ | ຕຳແໜ່ງ | ວັນທີແຕ່ງຕັ້ງ |
|---|---|---|
| ທ່ານ ວິໄລ ສີພະພອນ | ປະທານ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |
| ທ່ານ ນາງ ພອນສະໄຫມ ສຸຂະພົນ | ຮອງປະທານ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |
| ທ່ານ ສາຄອນ ຍໍພັນໄຊ | ສະມາຊິກ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |
| ທ່ານ ຄຳສິງ ສອນສີນມະວົງ | ສະມາຊິກ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |
| ທ່ານ ວິລັນເດດ ໄວຍະສິນສັກ | ສະມາຊິກ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |
| ທ່ານ ວິສຸດ ບົວສີສະອາດ | ສະມາຊິກ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |
| ທ່ານ ບຸນຊູ່ມ ສີສະຫວັດ | ສະມາຊິກ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |
| ທ່ານ ສຸກສະຫວັນ ມະນີວັນ | ສະມາຊິກ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |



jdbbanklaos www.jdbbank.com.la Hotline 1499

## ຂໍ້ມູນທົ່ວໄປ

### ຄະນະອຳນວຍການ

ສະມາຊິກຄະນະອຳນວຍການ ພາຍໃນໄລຍະທີ່ສິ້ນສຸດວັນທີ 31 ມີນາ 2026 ແລະ ໃນວັນທີ ທີ່ອອກບົດລາຍງານສະບັບນີ້ປະກອບມີ:

| ຊື່ | ຕຳແໜ່ງ | ວັນທີແຕ່ງຕັ້ງ / ລາອອກ |
|---|---|---|
| ທ່ານ ສາຄອນ ຍໍພັນໄຊ | ອຳນວຍການ | ແຕ່ງຕັ້ງ ວັນທີ 13 ຕຸລາ 2025 |
| ທ່ານ ວິລັນເດດ ໄວຍະສິນສັກ | ຮອງອຳນວຍການ | ແຕ່ງຕັ້ງ ວັນທີ 13 ຕຸລາ 2025 |
| ທ່ານ ຈັນທະພອນ ຈັນທະວົງ | ຮອງອຳນວຍການ | ແຕ່ງຕັ້ງ ວັນທີ 13 ຕຸລາ 2025 |
| ທ່ານ ຈັນຊະນະ ສີງຫາວົງ | ຮອງອຳນວຍການ | ແຕ່ງຕັ້ງ ວັນທີ 13 ຕຸລາ 2025 |
| ທ່ານ ນາງ ຄອນສະຫວັນ ວິຊາເທບ | ຮອງອຳນວຍການ | ແຕ່ງຕັ້ງ ວັນທີ 13 ຕຸລາ 2025 |
| ທ່ານ ນາງ ນິດຕາ ນາມມະວົງ | ຮອງອຳນວຍການ | ແຕ່ງຕັ້ງ ວັນທີ 13 ຕຸລາ 2025 |
| ທ່ານ ໄຊ ບຸລົມມະວົງ | ຮອງອຳນວຍການ | ແຕ່ງຕັ້ງ ວັນທີ 13 ຕຸລາ 2025 |
| ທ່ານ ວິລະພົງ ພົຈິດ | ຮອງອຳນວຍການ | ແຕ່ງຕັ້ງ ວັນທີ 13 ຕຸລາ 2025 |

### ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງທະນາຄານ ພາຍໃນໄລຍະທີ່ສິ້ນສຸດ ວັນທີ 31 ມີນາ 2026 ແລະ ນະວັນທີອອກເອກະສານລາຍງານການເງິນສະບັບນີ້ແມ່ນ ທ່ານ ສາຄອນ ຍໍພັນໄຊ - ຜູ້ອຳນວຍການ.

**ໃບລາຍງານຜົນໄດ້ຮັບ (ກ່ອນການກວດສອບ)**
**ສຳລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2026**

| | ບົດ ອະທິບາຍ | ສຳລັບໄລຍະສາມເດືອນສິ້ນ ສຸດວັນທີ 31 ມີນາ 2026 ລ້ານກີບ | ສຳລັບໄລຍະສາມເດືອນສິ້ນ ສຸດວັນທີ 31 ມີນາ 2025 ລ້ານກີບ |
|---|---|---|---|
| **ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ** | | | |
| ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ | 4 | 591,285 | 522,622 |
| ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ | 4 | (504,765) | (394,690) |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | | **86,520** | **127,933** |
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | 5 | 96,975 | 245,503 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | 5 | (34,869) | (42,664) |
| (ຂາດທຶນ)/ກຳໄລ ສຸດທິຈາກການລົງທຶນໃນຫຼັກຊັບ | | 6,911 | 10,187 |
| ກຳໄລສຸດທິ ຈາກການຊື້-ຂາຍເງິນຕາຕ່າງປະເທດ | | 68,319 | 17,234 |
| **ລາຍຮັບສຸດທິຈາກການດຳເນີນງານ** | | **223,856** | **358,193** |
| **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| ລາຍຮັບອື່ນໆຈາກການດຳເນີນງານ | | 65,616 | 9,765 |
| ລາຍຈ່າຍບໍລິຫານ | | (82,164) | (82,920) |
| ເງິນເດືອນ ແລະ ຄ່າໃຊ້ຈ່າຍກ່ຽວກັບພະນັກງານ | | (50,014) | (40,318) |
| ລາຍຈ່າຍບໍລິຫານອື່ນໆ | | (32,150) | (42,602) |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | | (20,686) | (15,412) |
| ລາຍຈ່າຍອື່ນໆໃນການດຳເນີນງານ | | (8,706) | (25,524) |
| ເງິນແຮສຸດທິສຳລັບໜີ້ທີ່ບໍ່ເກີດດອກອອກຜົນທີ່ລົງເປັນລາຍຈ່າຍ | | (3,736) | 20 |
| **ລວມກຳໄລກ່ອນເສຍອາກອນ** | | **174,180** | **244,123** |
| ອາກອນກຳໄລ | 6 | (17,160) | (51,447) |
| **ກຳໄລສຸດທິຫຼັງເສຍອາກອນ** | | **157,020** | **192,676** |
| **ກຳໄລຕໍ່ຮຸ້ນ (ກີບ)** | **21** | **209** | **286** |

ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ:

ທ່ານ ນາງ ວິລາຊິນີ ພິຈິດ
ຫົວໜ້າພະແນກບັນຊີ - ການເງິນ

ທ່ານ ນາງ ສຸດທິດາ ທຳມະວົງ
ຫົວໜ້າພະແນກກວດກາພາຍໃນ

ທ່ານ ສາຄອນ ຍຸ້ມັນໄຊ
ຜູ້ອຳນວຍການໃຫຍ່

ທະນາຄານ ຮ່ວມພັດທະນາ ມະຫາຊົນ JOINT DEVELOPMENT BANK

ນະຄອນຫຼວງວຽງຈັນ, ສປປ ລາວ
14 ພຶດສະພາ 2026

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 9 ເຖິງ 18 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

## ໃບລາຍງານຜົນໄດ້ຮັບ (ກ່ອນການກວດສອບ)
## ສຳລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2026

| | ບົດ ອະທິບາຍ | 31 ມີນາ 2026 ລ້ານກີບ (ກ່ອນການກວດສອບ) | 31 ທັນວາ 2025 ລ້ານກີບ (ກວດສອບ) |
|---|---|---|---|
| **ຊັບສິນ** | | | |
| **ເງິນສົດ ແລະ ເງິນຝາກຢູ່ກັບ ທຫລ** | | **9,820,329** | **7,612,766** |
| ເງິນສົດໃນຄັງ | 7 | 2,119,808 | 1,695,840 |
| ເງິນຝາກຢູ່ກັບ ທຫລ | 8 | 7,088,621 | 5,620,015 |
| ຄຳ ແລະ ວັດຖຸມີຄ່າ | 9 | 611,901 | 296,911 |
| **ໜີ້ຕ້ອງຮັບຈາກທະນາຄານອື່ນ** | | **1,777,229** | **2,621,257** |
| ເງິນຝາກກະແສລາຍວັນ | 10 | 1,451,869 | 1,454,857 |
| ເງິນຝາກມີກຳນົດ | 10 | 98,068 | 1,153,003 |
| ເງິນຝາກປະຢັດ | 10 | 227,292 | 13,397 |
| **ການລົງທຶນໃນຫຼັກຊັບ** | | **2,806,070** | **2,548,388** |
| ຫຼັກຊັບປະເພດມີໄວ້ເພື່ອຂາຍ | 11 | 1,710 | 1,710 |
| ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ | 11 | 1,021,436 | 1,000,321 |
| ທີ່ດິນຝາກຂາຍ | 11 | 1,532,925 | 911,644 |
| ການລົງທຶນອື່ນໆ | 11 | 250,000 | 634,713 |
| **ເງິນໃຫ້ກູ້ແກ່ລູກຄ້າ, ຫຼັງຫັກເງິນແຮສະເພາະ** | 11 | **25,320,433** | **25,021,933** |
| **ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ** | | **11,899** | **11,656** |
| **ຊັບສິນບັດຄົງທີ່** | | **804,561** | **770,057** |
| ການກໍ່ສ້າງກຳລັງດຳເນີນ ແລະ ຊັບສິນບັດຄົງທີ່ພວມເຄື່ອນຍ້າຍ | 13 | 35,489 | 22,141 |
| ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 14 | 478,201 | 481,970 |
| ຊັບສິນບັດຄົງທີ່ມີຕົວຕົນ | 15 | 256,255 | 246,852 |
| ສິດນຳໃຊ້ຊັບສິນ | 16 | 34,617 | 19,094 |
| **ຊັບສິນອື່ນໆ** | | **4,288,140** | **5,197,341** |
| ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ | | 423,716 | 273,758 |
| ຊັບສິນອື່ນໆ | | 3,864,424 | 4,923,583 |
| **ລວມຊັບສິນ** | | **44,828,661** | **43,783,399** |

ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ:

ທ່ານ ນາງ ວິລາຊິນີ ພິຈິດ
ຫົວໜ້າພະແນກບັນຊີ - ການເງິນ

ທ່ານ ນາງ ສຸດທິດາ ທຳມະວົງ
ຫົວໜ້າພະແນກກວດກາພາຍໃນ

ທ່ານ ສາຄອນ ພົມມະໄຊ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
14 ພຶດສະພາ 2026

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 9 ເຖິງ 18 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ



jdbbanklaos www.jdbbank.com.la Hotline 1499

**ໃບລາຍງານຜົນໄດ້ຮັບ (ກ່ອນການກວດສອບ)**
**ສຳລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2026**

| | ບົດ ອະທິບາຍ | 31 ມີນາ 2026 ລ້ານກີບ (ກ່ອນການກວດສອບ) | 31 ທັນວາ 2025 ລ້ານກີບ (ກວດສອບ) |
|---|---|---|---|
| **ໜີ້ສິນ ແລະ ທຶນ** | | | |
| **ໜີ້ສິນ** | | | |
| **ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການ ເງິນ** | | **2,731,308** | **3,174,493** |
| ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ | 17 | 245,926 | 518,992 |
| ເງິນຝາກມີກຳນົດ | 17 | 784,323 | 911,331 |
| ເງິນກູ້ຢືມຈາກທະນາຄານອື່ນ | 17 | 1,700,960 | 1,744,070 |
| ໜີ້ຕ້ອງສົ່ງອື່ນໆ | 17 | 100 | 100 |
| **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | | **37,642,323** | **36,009,458** |
| ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ | 18 | 7,494,559 | 7,106,846 |
| ເງິນຝາກມີກຳນົດ | 18 | 30,147,764 | 28,902,612 |
| **ໜີ້ສິນອື່ນໆ** | | **1,592,244** | **1,927,610** |
| ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ | | 1,128,758 | 1,139,943 |
| ໜີ້ສິນອື່ນໆ | | 463,486 | 787,667 |
| **ລວມໜີ້ສິນ** | | **41,965,875** | **41,111,560** |
| **ທຶນ** | | | |
| ທຶນຈົດທະບຽນ | 19 | 750,000 | 750,000 |
| ສ່ວນເກີນມູນຄ່າຮຸ້ນ | | 568,616 | 568,616 |
| ເງິນສຳຮອງຕາມກົດໝາຍ | | 148,067 | 148,067 |
| ເງິນສຳຮອງທົ່ວໄປ | | 102,229 | 102,229 |
| ເງິນແຮທົ່ວໄປສຳລັບກິດຈະກຳດ້ານສິນເຊື່ອ | | 120,535 | 107,934 |
| ໜີ້ສິນສຳລັບຊັບສິນທີ່ບໍ່ສາມາດເກັບຄືນໄດ້ | | 362,813 | 341,489 |
| ກຳໄລ/(ຂາດທຶນ) ທີ່ບໍ່ໄດ້ຮັບຈິງຈາກການປະເມີນມູນຄ່າຄຳຄືນໃໝ່ | | 15,408 | 15,408 |
| ກຳໄລສະສົມ | | 795,117 | 638,096 |
| **ລວມທຶນ** | | **2,862,786** | **2,671,839** |
| **ລວມໜີ້ສິນ ແລະ ທຶນ** | | **44,828,661** | **43,783,399** |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນາງ ວິລາຊິນີ ພິຈິດ | ທ່ານ ນາງ ສຸດທິດາ ທຳມະວົງ | ທ່ານ ສາຄອນ ຍົພັນໄຊ |
| ຫົວໜ້າພະແນກບັນຊີ - ການເງິນ | ຫົວໜ້າພະແນກກວດກາພາຍໃນ | ຜູ້ອຳນວຍການໃຫຍ່ |

ນະຄອນຫຼວງວຽງຈັນ, ສປປ ລາວ
14 ພຶດສະພາ 2026

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 9 ເຖິງ 18 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

## ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
## ສຳລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2026

| | ທຶນຈົດທະບຽນ ລ້ານກີບ | ສ່ວນເກີນມູນຄ່າຮຸ້ນ ລ້ານກີບ | ຄ່າເຜື່ອສຳລັບຊັບສິນທີ່ບໍ່ສາມາດກູ້ຄ່າຄືນໄດ້ | ກຳໄລ-ຂາດທຶນຈາກການຕີມູນຄ່າຄຳຄືນໃໝ່ ລ້ານກີບ | ເງິນແຮທົ່ວໄປສຳລັບກິດຈະກຳດ້ານສິນເຊື່ອ ລ້ານກີບ | ເງິນສຳຮອງຕາມກົດໝາຍ ລ້ານກີບ | ເງິນສຳຮອງທົ່ວໄປ ລ້ານກີບ | ກຳໄລສະສົມ/ (ຂາດທຶນສະສົມ) ລ້ານກີບ | ລວມ ລ້ານກີບ |
|---|---|---|---|---|---|---|---|---|---|
| **ຍອດເຫລືອໃນວັນທີ 1 ມັງກອນ 2026** | **750,000** | **586,616** | **341,489** | **15,408** | **107,934** | **148,067** | **102,229** | **638,096** | **2,671,839** |
| ຊັບສິນທີ່ບໍ່ສາມາດຕີມູນຄ່າຄືນໄດ້ | - | - | 21,325 | - | - | - | - | - | 21,325 |
| ເງິນແຮສຸດທິສຳລັບເງິນກູ້ທີ່ເກີດດອກອອກຜົນພາຍໃນປີ | - | - | - | - | 12,602 | - | - | - | 12,602 |
| ກຳໄລສຸດທິພາຍໃນປີ | - | - | - | - | - | - | - | 157,020 | 157,020 |
| **ຍອດເຫຼືອໃນວັນທີ 31 ມີນາ 2026** | **750,000** | **586,616** | **362,814** | **15,408** | **120,535** | **148,067** | **102,229** | **795,116** | **2,862,786** |

ກະກຽມໂດຍ:

ທ່ານ ນາງ ວິລາຊິນີ ພິຈິດ
ຫົວໜ້າພະແນກບັນຊີ - ການເງິນ

ອະນຸມັດໂດຍ:

ທ່ານ ນາງ ສຸດທິດາ ທຳມະວົງ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ສາຄອນ ຍົພັນໄຊ
ຜູ້ອຳນວຍການໃຫຍ່

ທະນາຄານ ຮ່ວມພັດທະນາ ມະຫາຊົນ JOINT DEVELOPMENT BANK Public

ນະຄອນຫຼວງວຽງຈັນ, ສປປ ລາວ
14 ພຶດສະພາ 2026

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 9 ເຖິງ 18 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ



jdbbanklaos www.jdbbank.com.la Hotline 1499

## ໃບລາຍງານກະແສເງິນສົດ
## ສຳລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2026

| | ບົດ ອະທິບາຍ | 31 ມີນາ 2026 ລ້ານກີບ (ກ່ອນການກວດສອບ) | 31 ມີນາ 2025 ລ້ານກີບ (ກ່ອນການກວດສອບ) |
|---|---|---|---|
| **ກິດຈະກຳການດຳເນີນງານ** | | | |
| **ກຳໄລ ສຸດທິກ່ອນຫັກອາກອນ** | | **174,180** | **244,123** |
| ດັດແກ້ສຳລັບ: | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | | 20,686 | 15,412 |
| ສະສາງ ແລະ ຂາຍຊັບສິນ | | 4 | 227 |
| ລາຍຈ່າຍເງິນແຮສຳລັບການສູນເສຍເງິນກູ້ | | 67,851 | 104,178 |
| ລາຍຮັບດອກເບ້ຍ | | (591,285) | (522,622) |
| ລາຍຈ່າຍດອກເບ້ຍ | | 504,765 | 394,690 |
| ລາຍຮັບຈາກຄ່າ | | (59,749) | (2,236) |
| **ກະແສເງິນສົດຈາກກຳໄລໃນການດຳເນີນງານກ່ອນການປ່ຽນແປງຊັບສິນ ແລະ ໜີ້ສິນໃນການດຳເນີນງານ** | | **116,452** | **233,771** |
| *(ເພີ່ມຂຶ້ນ)/ຫຼຸດລົງໃນຊັບສິນດຳເນີນງານ* | | | |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | | (1,750,758) | (1,304,749) |
| ເງິນກູ້ຢືມໃຫ້ລູກຄ້າ | | (285,898) | (2,532,868) |
| ຊັບສິນອື່ນໆ | | 909,201 | 23,370 |
| *ເພີ່ມຂຶ້ນ/(ຫຼຸດລົງ) ໃນໜີ້ສິນດຳເນີນງານ* | | | |
| ໜີ້ຕ້ອງສົ່ງໃຫ້ ທຫລ ແລະ ທະນາຄານອື່ນ | | (400,074) | 262,633 |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | | 1,632,865 | 1,030,501 |
| ໜີ້ສິນອື່ນໆ | | (335,366) | (67,976) |
| **ກະແສເງິນສົດສຸດທິຈາກ (ໃຊ້ໃນ) ກິດຈະກຳການດຳເນີນງານ** | | **(113,579)** | **(2,355,317)** |
| ລາຍຈ່າຍດອກເບ້ຍ | | (561,210) | (386,509) |
| ລາຍຮັບດອກເບ້ຍ | | 462,177 | 439,450 |
| ລາຍຈ່າຍອາກອນກຳໄລ | | (91,737) | (110,348) |
| **ກະແສເງິນສົດສຸດທິ ທີ່ເກີດຈາກ/(ນຳໃຊ້ໃນ) ກິດຈະກຳການດຳເນີນງານ** | | **(304,348)** | **(2,412,725)** |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນາງ ວິລາຊິນີ ພິຈິດ | ທ່ານ ນາງ ສຸດທິດາ ທຳມະວົງ | ທ່ານ ສາຄອນ ຍໍພັນໄຊ |
| ຫົວໜ້າພະແນກບັນຊີ - ການເງິນ | ຫົວໜ້າພະແນກກວດກາພາຍໃນ | ຜູ້ອຳນວຍການໃຫຍ່ |

ທະນາຄານ ຮ່ວມພັດທະນາ ມະຫາຊົນ JOINT DEVELOPMENT BANK Public ແຫ່ງ ສປປ ລາວ ນະຄອນຫຼວງວຽງຈັນ

ນະຄອນຫຼວງວຽງຈັນ, ສປປ ລາວ
14 ພຶດສະພາ 2026

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 9 ເຖິງ 18 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

**ໃບລາຍງານກະແສເງິນສົດ**
**ສຳລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2026**

| | ບົດ ອະທິບາຍ | 31 ມີນາ 2026 ລ້ານກີບ (ກ່ອນການກວດສອບ) | 31 ມີນາ 2025 ລ້ານກີບ (ກ່ອນການກວດສອບ) |
|---|---|---|---|
| **ກິດຈະກຳການລົງທຶນ** | | | |
| ການຈ່າຍເງິນສຳລັບການກໍ່ສ້າງທີ່ກຳລັງດຳເນີນຢູ່ | | (13,348) | 0 |
| ການຈ່າຍເງິນສຳລັບຊັບສິນທີ່ບໍ່ມີຕົວຕົນ | | (7,186) | (691) |
| ການຈ່າຍເງິນສຳລັບຊັບສິນທີ່ມີຕົວຕົນ | | (4,069) | (6,189) |
| ລາຍຮັບຈາກການຈຳໜ່າຍຊັບສິນ | | 8 | 167 |
| ການຈ່າຍເງິນສຳລັບສິດການນຳໃຊ້ຊັບສິນ | | (18,106) | (2,263) |
| ການຈ່າຍເງິນສຳລັບຫຼັກຊັບທີ່ຖືໄວ້ຈົນຄົບກຳນົດ | | (59,720) | (13,209) |
| ລາຍຮັບຈາກການລົງທຶນ ທາງດ້ານການເງິນ - ຖືໄວ້ຈົນຄົບກຳນົດ | | 23,971 | 0 |
| ການຈ່າຍຈາກການຊື້ຄຳ | | (840,526) | 0 |
| ລາຍຮັບຈາກຂາຍຄຳ | | 525,535 | 26,869 |
| ການຈ່າຍສຳລັບການລົງທຶນອື່ນໆ | | (250,000) | 0 |
| ການຮັບຈາກການລົງທຶນອື່ນໆ | | 634,712 | 0 |
| **ກະແສເງິນສົດສຸດທິ ທີ່ນຳໃຊ້ໃນ ກິດຈະກຳການລົງທຶນ** | | **(8,727)** | **4,683** |
| **ກິດຈະກຳທາງການເງິນ** | | | |
| ຈ່າຍເງິນກູ້ຢືມກັບ ທະນາຄານແຫ່ງ ສປປ ລາວ | | (49,142) | (118,827) |
| ຮັບເງິນຈາກການໃຫ້ກູ້ຢືມກັບ ທະນາຄານແຫ່ງ ສປປ ລາວ | | - | 55,000 |
| **ກະແສເງິນສົດສຸດທິນຳໃຊ້ເຂົ້າໃນກິດຈະກຳທາງການເງິນ** | | **(49,142)** | **(63,827)** |
| ການປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ | | (362,217) | (2,471,869) |
| ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນໄລຍະ | | 9,120,149 | 6,748,974 |
| **ເງິນສົດ ແລະ ທຽບເທົ່າເງິນສົດທ້າຍໄລຍະ** | **20** | **8,757,932** | **4,277,106** |

ກິດຈະກຳການລົງທຶນທີ່ບໍ່ແມ່ນເງິນສົດ:

| | | |
|---|---|---|
| - ຊັບສິນທີ່ຖືກຝາກຂາຍເຊິ່ງສິດເຊີຍກັບເງິນກູ້ໃຫ້ລູກຄ້າ | 621,281 | - |
| - ສ່ວນປ່ຽນແປງຈາກການຕີລາຄາ ຄືນຕຶກອາຄານ | 21,325 | - |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນາງ ວິລາຊີນີ ພິຈິດ | ທ່ານ ນາງ ສຸດທິດາ ທຳມະວົງ | ທ່ານ ສາຄອນ ຍົມພັນໄຊ |
| ຫົວໜ້າພະແນກບັນຊີ - ການເງິນ | ຫົວໜ້າພະແນກກວດກາພາຍໃນ | ຜູ້ອຳນວຍການໃຫຍ່ |

ທະນາຄານ ຮ່ວມພັດທະນາ ມະຫາຊົນ JOINT DEVELOPMENT BANK Public ນະຄອນຫຼວງວຽງຈັນ ສປປ ລາວ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ພຶດສະພາ 2026

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 9 ເຖິງ 18 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

**ບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນ ໂດຍຫຍໍ້ (ກ່ອນການກວດສອບ)**
**ສຳລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2026**

## 1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານ ຮ່ວມພັດທະນາ ມະຫາຊົນ (ຊື່ເກົ່າ ທະນາຄານ ຮ່ວມພັດທະນາ ຈຳກັດ) ແມ່ນບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ (ຕລຊລ) ຢ່າງເປັນທາງການ.

ກິດຈະກຳຫຼັກຂອງທະນາຄານແມ່ນໃຫ້ບໍລິການທາງດ້ານ: ການລະດົມທຶນ ແລະ ການຮັບຝາກເງິນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຈາກບັນດາອົງການຈັດຕັ້ງ ແລະ ບຸກຄົນຕ່າງໆ; ການປ່ອຍກູ້ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວໃຫ້ແກ່ອົງການຈັດຕັ້ງ ແລະ ບຸກຄົນທົ່ວໄປ ອີງຕາມເນື້ອໃນ ແລະ ຄວາມອາດສາມາດຂອງແຫຼ່ງເງິນທຶນຂອງທະນາຄານ; ການເຮັດທຸລະກຳເງິນຕາຕ່າງປະເທດ; ບໍລິການດ້ານການເງິນລະຫວ່າງປະເທດ; ສ່ວນຫຼຸດໃບຢັ້ງຢືນການຄ້າ, ພັນທະບັດ ແລະ ເອກະສານທີ່ມີມູນຄ່າຕ່າງໆ. ໃຫ້ບໍລິການອື່ນໆດ້ານການທະນາຄານຕາມທີ່ທະນາຄານແຫ່ງ ສປປ ລາວ **(ທຫລ)** ວາງອອກ.

ທະນາຄານເປັນສະມາຊິກສຳນັກງານປົກປ້ອງເງິນຝາກ, ທະນາຄານແຫ່ງ ສປປ ລາວ. ດັ່ງນັ້ນ ເງິນຝາກຂອງລູກຄ້າແມ່ນຮັບປະກັນໂດຍ ສຳນັກງານປົກປ້ອງເງິນຝາກ.

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ອາຄານ ເລກທີ 82, ຖະໜົນລ້ານຊ້າງ, ນະຄອນຫຼວງວຽງຈັນ ສປປ ລາວ.

ຂໍ້ມູນທາງດ້ານການເງິນແມ່ນສະແດງເປັນເງິນກີບ ແລະ ສະແດງທຽບເທົ່າເປັນຫົວໜ່ວຍ **“ລ້ານ”**, ເວັ້ນເສຍແຕ່ຈະມີການລະບຸໄວ້ເປັນຢ່າງອື່ນ.

ເອກະສານລາຍງານການເງິນສະບັບນີ້ໄດ້ຮັບການຮັບຮອງຈາກສະພາບໍລິຫານ ໃນວັນທີ 14 ພຶດສະພາ 2026.

## 2. ພື້ນຖານການບັນຊີ

ເອກະສານລາຍງານການເງິນກາງປີໄດ້ຖືກສ້າງຂຶ້ນໂດຍອີງຕາມນະໂຍບາຍການບັນຊີ ຂອງບໍລິສັດດັ່ງທີ່ໄດ້ອະທິບາຍໄວ້ໃນລາຍລະອຽດເພີ່ມເຕີມໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025. ເອກະສານລາຍງານການເງິນຫຼັກ(ເຊັ່ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ,ໃບລາຍງານລາຍໄດ້ລວມ , ໃບລາຍງານກະແສເງິນສົດ ແລະ ໃບລາຍງານສ່ວນປ່ຽນແປງທຶນ) ຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນສະບັບນີ້ ຄວນອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2025.

ໃນການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີຂອງເອກະສານລາຍງານການເງິນ, ລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ, ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການກະທຳໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນເຫຼົ່ານັ້ນ.

## 3. ການປະມານການ

ການກະກຽມຂໍ້ມູນທາງການເງິນ ຈຳເປັນຕ້ອງໃຫ້ຜູ້ບໍລິຫານດຳເນີນການຕັດສິນໃຈ, ການຄາດຄະເນ ແລະ ການຕັ້ງຂໍ້ສົງໄສຕ່າງໆທີ່ມີຜົນກະທົບຕໍ່ການນຳໃຊ້ນະໂຍບາຍການບັນຊີ ແລະ ລາຍງານຈຳນວນຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍໃນຫຼັກການການບັນຊີ. ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການປະມານການ.

ໃນການກະກຽມຂໍ້ມູນທາງການເງິນ, ການຕັດສິນໃຈທີ່ສຳຄັນທີ່ຜູ້ບໍລິຫານໄດ້ດຳເນີນໃນການນຳໃຊ້ນະໂຍບາຍການບັນຊີຂອງບໍລິສັດ ແລະ ແຫຼ່ງຂໍ້ມູນຫຼັກທີ່ເປັນການຄາດການຄວາມບໍ່ແນ່ນອນ ແມ່ນເຊັ່ນດຽວກັນກັບທີ່ໄດ້ຮອງຮັບໃນເອກະສານລາຍງານການເງິນສຳລັບປີສິ້ນສຸດ 31 ທັນວາ 2025.

## 4. ລາຍຮັບສຸດທິຈາກດອກເບ້ຍ

ສຳລັບໄລຍະສາມເດືອນ:

| | 31 ມີນາ 2026 ລ້ານກີບ | 31 ມີນາ 2025 ລ້ານກີບ |
|---|---|---|
| **ລາຍຮັບຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກ:** | | |
| ເງິນຝາກລະຫວ່າງທະນາຄານ | 9,198 | 5,422 |
| ເງິນກູ້ທີ່ປ່ອຍໃຫ້ລູກຄ້າ | 568,329 | 502,010 |
| ພັນທະບັດລັດຖະບານ ທີ່ອອກໃຫ້ໂດຍກະຊວງການເງິນ | 13,758 | 15,190 |
| | **591,285** | **522,622** |
| **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍສຳລັບ:** | | |
| ເງິນຝາກຂອງທະນາຄານອື່ນ | (29,041) | (35,168) |
| ເງິນຝາກຂອງລູກຄ້າ | (475,724) | (359,521) |
| | **(504,765)** | **(394,690)** |
| **ລາຍຮັບສຸດທິຈາກດອກເບ້ຍອື່ນໆ ແລະ ຄ້າຍຄືດອກເບ້ຍ** | **86,520** | **127,933** |

## 5. ລາຍຮັບຈາກຄ່າທໍານຽມ ແລະ ຄ່າບໍລິການ

ສໍາລັບໄລຍະສາມເດືອນ:

| | 31 ມີນາ 2026 ລ້ານກີບ | 31 ມີນາ 2025 ລ້ານກີບ |
|---|---|---|
| **ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການຈາກ:** | | |
| ທຸລະກໍາລະຫວ່າງທະນາຄານ | 834 | 916 |
| ທຸລະກໍາທາງດ້ານການເງິນ, ທຸລະກໍາ ATM ແລະ ການໂອນເງິນ | 94,548 | 242,990 |
| ບໍລິການຊໍາລະສະສາງ | 1,593 | 1,597 |
| | **96,975** | **245,503** |
| **ລາຍຈ່າຍຄ່າທໍານຽມ ແລະ ຄ່າບໍລິການຈາກ:** | | |
| ບໍລິການຊໍາລະສະສາງ | (5,659) | (6,394) |
| ທຸລະກໍາລະຫວ່າງທະນາຄານ | (29,210) | (36,270) |
| | **(34,869)** | **(42,664)** |
| **ລາຍຮັບສຸດທິຄ່າທໍານຽມ ແລະ ຄ່າບໍລິການ** | **62,106** | **202,839** |

## 6. ອາກອນ

### ອາກອນກໍາໄລ

ຄັງສໍາຮອງແມ່ນຖືກສ້າງຂຶ້ນເພື່ອອາກອນກໍາໄລໃນງວດປະຈຸບັນຕາມກົດໝາຍອາກອນ. ທະນາຄານມີພັນທະຕ້ອງຊໍາລະອາກອນໃນອັດຕາ 13% ຂອງກໍາໄລທີ່ຕ້ອງຈ່າຍທັງໝົດ ກ່ອນອາກອນກໍາໄລ.

## 7. ເງິນສົດໃນຄັງ

| | 31 ມີນາ 2026 ລ້ານກີບ | 31 ທັນວາ 2025 ລ້ານກີບ |
|---|---|---|
| ເງິນສົດໃນຄັງທີ່ເປັນສະກຸນເງິນກີບ | 336,431 | 342,902 |
| ເງິນສົດໃນຄັງທີ່ເປັນສະກຸນເງິນຕາຕ່າງປະເທດ | 1,783,376 | 1,352,938 |
| | **2,119,808** | **1,695,840** |

## 8. ເງິນຝາກຢູ່ກັບ ທຫລ

| | 31 ມີນາ 2026 ລ້ານກີບ | 31 ທັນວາ 2025 ລ້ານກີບ |
|---|---|---|
| ເງິນຝາກກະແສລາຍວັນ - ໝູນວຽນ | 4,860,896 | 3,761,217 |
| ເງິນຝາກພາກບັງຄັບ | 2,227,719 | 1,858,792 |
| ເງິນຝາກສຳລັບທຶນຈົດທະບຽນ | 6 | 6 |
| | **7,088,621** | **5,620,015** |

## 9. ຄຳ ແລະ ວັດຖຸມີຄ່າອື່ນໆຢູ່ທະນາຄານ

| | 31 ມີນາ 2026 ລ້ານກີບ | 31 ທັນວາ 2025 ລ້ານກີບ |
|---|---|---|
| ຄຳ ແລະ ວັດຖຸມີຄ່າອື່ນໆຢູ່ທະນາຄານ | 611,901 | 281,503 |
| **ຫັກ:** (ຂາດທຶນ) ທີ່ບໍ່ເກີດຂຶ້ນຈິງຈາກການຕີມູນຄ່າຄືນຂອງຄຳ | - | 15,408 |
| | **611,901** | **296,911** |

## 10. ໜີ້ຕ້ອງຮັບຈາກທະນາຄານອື່ນ

| | 31 ມີນາ 2026 ລ້ານກີບ | 31 ທັນວາ 2025 ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນຢູ່ກັບທະນາຄານອື່ນໆ** | **1,451,869** | **1,454,857** |
| - ທະນາຄານພາຍໃນປະເທດ | 29,747 | 87,465 |
| - ທະນາຄານຕ່າງປະເທດ | 1,422,122 | 1,367,392 |
| **ເງິນຝາກມີກຳນົດຢູ່ທະນາຄານອື່ນ** | **98,068** | **1,153,003** |
| - ທະນາຄານພາຍໃນປະເທດ (i) | 98,068 | 1,153,003 |
| **ເງິນຝາກປະຢັດຢູ່ທະນາຄານອື່ນ** (ii) | **227,292** | **13,397** |
| - ທະນາຄານພາຍໃນປະເທດ | 628 | 1,129 |
| - ທະນາຄານຕ່າງປະເທດ | 226,664 | 12,268 |
| | **1,777,229** | **2,621,257** |

**ບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນ ໂດຍຫຍໍ້ (ກ່ອນການກວດສອບ)**
**ສໍາລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2026**

## 11. ການລົງທຶນໃນຫຼັກຊັບ

| | 31 ມີນາ 2026 ລ້ານກີບ | 31 ທັນວາ 2025 ລ້ານກີບ |
|---|---|---|
| ຫຼັກຊັບມີໄວ້ເພື່ອຂາຍ (11.1) | 1,710 | 1,710 |
| ຫຼັກຊັບທີ່ຖືຈົນຄົບກໍານົດ (11.2) | 1,021,436 | 1,000,322 |
| ຫຼັກຊັບທີ່ດິນ ທີ່ຝາກຂາຍ (11.3) | 1,532,925 | 911,644 |
| ຫຼັກຊັບອື່ນໆ (11.4) | 250,000 | 634,712 |
| | **2,806,070** | **2,548,388** |

### 11.1 ຫຼັກຊັບປະເພດມີໄວ້ເພື່ອຂາຍ

ຫຼັກຊັບເພື່ອຂາຍປະກອບດ້ວຍຮຸ້ນ 1,000,000 ຮຸ້ນຂອງບໍລິສັດ ໄຟຟ້າລາວ ມະຫາຊົນ, ເຊິ່ງເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ.

### 11.2 ຫຼັກຊັບປະເພດຖືໄວ້ຈົນຄົບກໍານົດ

ສະແດງເຖິງພັນທະບັດທີ່ອອກໂດຍກະຊວງການເງິນ ແລະ ພັນທະບັດຈາກການຊໍາລະໜີ້ໂດຍຜ່ານພັນທະບັດລັດຖະບານ, ໂດຍມີອັດຕາດອກເບ້ຍຈາກ 5.5% ຫາ 6% ຕໍ່ປີ.

### 11.3 ຫຼັກຊັບປະເພດທີ່ດິນ ທີ່ຝາກຂາຍ

ທີ່ດິນທີ່ຢູ່ພາຍໃຕ້ການຝາກຂາຍມູນຄ່າທັງໝົດ 1,532,925 ລ້ານກີບ ສ່ວນໃຫຍ່ແມ່ນທີ່ດິນທີ່ໄດ້ຮັບຈາກລູກຄ້າເງິນກູ້ເປັນສ່ວນໜຶ່ງຂອງຂໍ້ຕົກລົງການຊົດເຊີຍເງິນກູ້. ພາຍໃຕ້ສັນຍາເຫຼົ່ານີ້, ລູກຄ້າມີສິດທີ່ຈະຊື້ຊັບສິນຄືນຈາກທະນາຄານພາຍໃນໄລຍະເວລາທີ່ໄດ້ຕົກລົງກັນໃນສັນຍາ.

### 11.4 ຫຼັກຊັບປະເພດອື່ນໆ

ທະນາຄານໄດ້ລົງທຶນ 250,000 ລ້ານກີບ ໃນກອງທຶນສ່ວນບຸກຄົນ ໂດຍທະນະຄານຈະຮັບຜົນຕອບແທນ ຈາກໜ່ວຍລົງທຶນ



jdbbanklaos www.jdbbank.com.la Hotline 1499

ທະນາຄານ ຮ່ວມພັດທະນາ ມະຫາຊົນ

ບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນ ໂດຍຫຍໍ້ (ກ່ອນການກວດສອບ)
ສໍາລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2026

## 12. ເງິນໃຫ້ກູ້ແກ່ລູກຄ້າ, ຫຼັງຫັກເງິນແຮສະເພາະສໍາລັບກິດຈະກໍາສິນເຊື່ອ

| | 31 ມີນາ 2026 ລ້ານກີບ | 31 ທັນວາ 2025 ລ້ານກີບ |
|---|---|---|
| ເງິນກູ້ໃຫ້ກັບລູກຄ້າ | 25,388,283 | 25,126,11 |
| ຫັກເງິນແຮສະເພາະ | (67,850) | (104,178) |
| | **25,320,433** | **25,021,933** |

ອັດຕາດອກເບ້ຍສໍາລັບເງິນກູ້ພາຍໃນໄລຍະ ມີດັ່ງລຸ່ມນີ້:

| | 2026 ອັດຕາດອກເບ້ຍ % ຕໍ່ປີ | 2025 ອັດຕາດອກເບ້ຍ % ຕໍ່ປີ |
|---|---|---|
| ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນກີບ | 5.50% - 16.00% | 5.50% - 16.00% |
| ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນໂດລາ | 7.00% - 14.00% | 7.00% - 14.00% |
| ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນບາດ | 7.00% - 14.00% | 7.00% - 14.00% |
| ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນຢວນ | 10.00% - 11.00% | 10.00% - 11.00% |

ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ເງິນແຮຕາມລະບຽບການຂອງ ທຫລ ໃນວັນທີ 31 ມີນາ 2026 ມີດັ່ງນີ້:

| ການຈັດຊັ້ນໜີ້ | ຍອດເຫຼືອເງິນກູ້ ລ້ານກີບ | ເງິນແຮສະເພາະ ລ້ານກີບ | ເງິນແຮທົ່ວໄປ ລ້ານກີບ |
|---|---|---|---|
| ໜີ້ເກີດດອກອອກຜົນ | | | |
| - ໜີ້ປົກກະຕິ | 25,342,124 | - | 120,535 |
| - ໜີ້ຄວນເອົາໃຈໃສ່ | - | (11,680) | - |
| ໜີ້ບໍ່ເກີດດອກອອກຜົນ | | | |
| - ໜີ້ຕໍ່າກວ່າມາດຕະຖານ | - | (1,071) | - |
| - ໜີ້ສົງໄສ | - | (10,082) | - |
| - ໜີ້ສູນ | 46,159 | (45,017) | - |
| **ລວມ** | **25,388,283** | **(67,850)** | **120,535** |



jdbbanklaos www.jdbbank.com.la Hotline 1499

## 13. ການກໍ່ສ້າງກຳລັງດຳເນີນ ແລະ ຊັບສິນບັດຄົງທີ່ພວມເຄື່ອນຍ້າຍ

| | ລ້ານກີບ |
|---|---|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2026** | 22,141 |
| ເພີ່ມຂຶ້ນ | 13,348 |
| ໂອນເຂົ້າເປັນຊັບສິນບັດຄົງທີ່ມີຕົວຕົນ | - |
| **ຍອດເຫຼືອ ໃນວັນທີ 31 ມີນາ 2026** | **35,489** |

## 14. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

| | ສິດນຳໃຊ້ທີ່ດິນ ລ້ານກີບ | ຊັອບແວ ລ້ານກີບ | ລວມ ລ້ານກີບ |
|---|---|---|---|
| ຍອດຍົກມາມູນຄ່າຕາມບັນຊີສຸດທິ - 1 ມັງກອນ 2026 | 437,594 | 44,377 | 481,970 |
| ເພີ່ມຂຶ້ນ | 5,500 | 1,686 | 7,186 |
| ຄ່າເສື່ອມລາຄາ | - | (3,426) | (3,426) |
| ສະສາງ ແລະ ເອົາອອກ- ມູນຄ່າສຸດທິ | - | (7,529) | (7,529) |
| **ຍອດເຫຼືອມູນຄ່າຕາມບັນຊີສຸດທິ** | **443,094** | **35,107** | **478,201** |

## 15. ຊັບສິນຄົງທີ່ມີຕົວຕົນ

| | ລ້ານກີບ |
|---|---|
| ຍອດຍົກມາມູນຄ່າຕາມບັນຊີສຸດທິ – 1 ມັງກອນ 2026 | 246,852 |
| ເພີ່ມຂຶ້ນ | 31,828 |
| ໂອນເຂົ້າ | (15,126) |
| ຄ່າຫຼູ້ຍຫ້ຽນ | (7,299) |
| **ຍອດເຫຼືອມູນຄ່າຕາມບັນຊີສຸດທິ** | **256,255** |

## 16. ສິດນຳໃຊ້ຊັບສິນ

| | ລ້ານກີບ |
|---|---|
| ຍອດຍົກມາມູນຄ່າຕາມບັນຊີສຸດທິ – 1 ມັງກອນ 2026 | 19,094 |
| ເພີ່ມຂຶ້ນ | 18,106 |
| ເອົາອອກ - ມູນຄ່າສຸດທິ | (449) |
| ຄ່າເສື່ອມມູນຄ່າ | (2,134) |
| **ຍອດເຫຼືອມູນຄ່າຕາມບັນຊີສຸດທິ** | **34,617** |

## 17. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ

| | 31 ມີນາ 2026 ລ້ານກີບ | 31 ທັນວາ 2025 ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນ** | **245,920** | **518,956** |
| ທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ | 238,164 | 518,938 |
| ຄັງເງິນແຫ່ງຊາດ | 7,756 | 18 |
| **ເງິນຝາກປະຢັດ** | **6** | **36** |
| ທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ | 6 | 36 |
| **ເງິນຝາກມີກຳນົດ** | **784,323** | **911,331** |
| ທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ | 784,323 | 911,331 |
| **ເງິນກູ້ຢືມ** | **1,700,960** | **1,744,070** |
| ທະນາຄານ ແຫ່ງ ສປປ ລາວ | 1,700,960 | 1,744,070 |
| **ໜີ້ຕ້ອງສົ່ງອື່ນໆໃຫ້ທະນາຄານອື່ນ ແລະ ສະຖາບັນການເງິນອື່ນ** | **100** | **100** |
| | **2,731,308** | **3,174,493** |

## 18. ໜີ້ຕ້ອງສົ່ງໃຫ້ລູກຄ້າ

| | 31 ມີນາ 2026 ລ້ານກີບ | 31 ທັນວາ 2025 ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນ** | **2,029,868** | **1,418,090** |
| ເປັນສະກຸນເງິນກີບ | 494,018 | 270,185 |
| ເປັນສະກຸນເງິນຕາຕ່າງປະເທດ | 1,535,850 | 1,147,906 |
| **ເງິນຝາກປະຢັດ** | **5,464,691** | **5,688,755** |
| ເປັນສະກຸນເງິນກີບ | 1,258,795 | 1,181,546 |
| ເປັນສະກຸນເງິນຕາຕ່າງປະເທດ | 4,205,896 | 4,507,210 |
| **ເງິນຝາກມີກຳນົດ** | **30,147,764** | **28,902,612** |
| ເປັນສະກຸນເງິນກີບ | 3,801,479 | 3,515,200 |
| ເປັນສະກຸນເງິນຕາຕ່າງປະເທດ | 26,346,285 | 25,387,412 |
| | **37,642,323** | **36,009,458** |

## 19. ທຶນຈົດທະບຽນ

| | ທຶນຈົດທະບຽນ (ຮຸ້ນ) | ທຶນຈົດທະບຽນ (ລ້ານກີບ) | ທຶນຈົດທະບຽນທີ່ຖອກແລ້ວ (ລ້ານກີບ) |
|---|---|---|---|
| ໃນວັນທີ 1 ມັງກອນ 2025 | **674,666,100** | **674,666** | **568,616** |
| ການອອກຮຸ້ນໃໝ່ | 75,333,900 | 75,334 | - |
| **ໃນວັນທີ 31 ທັນວາ 2025** | **750,000,000** | **750,000** | **568,616** |

| | ທຶນຈົດທະບຽນ (ຮຸ້ນ) | ທຶນຈົດທະບຽນ(ລ້ານກີບ) | ທຶນຈົດທະບຽນທີ່ຖອກແລ້ວ(ລ້ານກີບ) |
|---|---|---|---|
| ໃນວັນທີ 1 ມັງກອນ 2026 | 750,000,000 | 750,000 | 568,616 |
| ປັບປຸງມູນຄ່າຮຸ້ນ | - | - | |
| **ໃນວັນທີ 31 ມີນາ 2026** | **750,000,000** | **750,000** | **568,616** |

ອີງຕາມມະຕິການປະຊຸມຜູ້ຖືຮຸ້ນ ເລກທີ 305/JDB ທະນາຄານໄດ້ປັບປຸງຄ່າຫຸ້ນພື້ນຖານຈາກ 10,000 ກີບ/ຮຸ້ນ ເປັນ 1,000 ກີບ/ຮຸ້ນ. ຜູ້ຖືຫຸ້ນເກົ່າຈະໄດ້ຮັບຫຸ້ນໃນອັດຕາ 1:10. ການປັບປຸງນີ້ມີຜົນກະທົບຕໍ່ຈຳນວນຫຸ້ນ ແຕ່ບໍ່ມີຜົນຕໍ່ມູນຄ່າລວມຂອງຮຸ້ນ. ນອກຈາກນັ້ນ ທະນາຄານໄດ້ອອກຮຸ້ນໃໝ່ 75,333,900 ຮຸ້ນ ດ້ວຍຄ່າຮຸ້ນພື້ນຖານ 1,000 ກີບ/ຮຸ້ນ ສຳລັບການຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) (ບົດອະທິບາຍຊ້ອນທ້າຍທີ 1).

ໃນວັນທີຂອງເອກະສານລາຍງານການເງິນສະບັບນີ້, ຂັ້ນຕອນການສະເໜີຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ (IPO) ແມ່ນໄດ້ສຳເລັດແລ້ວ (ບົດອະທິບາຍຊ້ອນທ້າຍທີ 1) ແລະ ການອອກຮຸ້ນໃໝ່ແມ່ນຍັງຢູ່ໃນຂັ້ນຕອນການທົບທວນຄືນຈາກທາງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## 20. ເງິນສົດ ແລະ ທຽບເທົ່າເງິນສົດ

| | 31 ມີນາ 2026 ລ້ານກີບ | 31 ທັນວາ 2025 ລ້ານກີບ |
|---|---|---|
| ເງິນສົດໃນຄັງ | 2,119,808 | 3,367,031 |
| ເງິນຝາກກະແສລາຍວັນຢູ່ກັບ ທຫລ | 4,860,896 | 1,994,142 |
| ເງິນຝາກກະແສລາຍວັນຢູ່ກັບທະນາຄານອື່ນ | 1,777,229 | 5,430,167 |
| | **8,757,932** | **9,120,148** |

## 21. ກຳໄລຕໍ່ຮຸ້ນ

ມູນຄ່າຂອງກຳໄລຕໍ່ຮຸ້ນ ແມ່ນຄິດໄລ່ຈາກຜົນຫານລະຫວ່າງ ກຳໄລຫຼັງຫັກອາກອນໃນງວດນີ້ທີ່ຄາດວ່າຈະຕ້ອງຈ່າຍໃຫ້ກັບຜູ້ຖືຮຸ້ນສາມັນ ຂອງທະນາຄານ ກັບຈຳນວນສະເລ່ຍຂອງຮຸ້ນສາມັນທີ່ອອກ ແລະ ຊຳລະແລ້ວພາຍໃນໄລຍະສາມເດືອນ.
ລາຍການດັ່ງລຸ່ມນີ້ສະແດງເຖິງຂໍ້ມູນ ທີ່ໃຊ້ເຂົ້າໃນການຄິດໄລ່ ກຳໄລຕໍ່ຮຸ້ນ.

ສຳລັບໄລຍະສາມເດືອນ:

| | ກ່ອນການກວດສອບ 31 ມີນາ 2026 ລ້ານກີບ | ກ່ອນການກວດສອບ 31 ມີນາ 2025 ລ້ານກີບ |
|---|---|---|
| ກຳໄລສຸດທິທີ່ເປັນຂອງຜູ້ຖືຮຸ້ນສາມັນຂອງທະນາຄານ (ລ້ານກີບ) | 157,020 | 192,675 |
| ສະເລ່ຍຕາມຈຳນວນຂອງຮຸ້ນສາມັນ (ຮຸ້ນ) (ບົດອະທິບາຍ 19) | 750,000 | 674,666 |
| ມູນຄ່າຕໍ່ຮຸ້ນ (ກີບ) | 1,000 | 1,000 |
| ກຳໄລຕໍ່ຮຸ້ນ (ກີບ) | 910 | 289 |

ເນື່ອງຈາກທະນາຄານໄດ້ປ່ຽນມູນຄ່າຮຸ້ນຈາກ 10,000 ກີບ/ຮຸ້ນ ມາເປັນ 1,000 ກີບ/ຮຸ້ນ (ບົດອະທິບາຍຊ້ອນທ້າຍທີ 19), ການຄຳນວນກຳໄລຕໍ່ຮຸ້ນສຳລັບໄລຍະເວລາ 3 ເດືອນສິ້ນສຸດວັນທີ 31 ມີນາ 2026 ແມ່ນຄຳນວນໂດຍອີງໃສ່ການສົມມຸດຕິຖານຕາມມູນຄ່າຮຸ້ນ 1,000 ກີບ/ຮຸ້ນ ເພື່ອຈຸດປະສົງໃນການສົມທຽບ.

ຈຳນວນຮຸ້ນໃນວັນທີ 31 ມີນາ 2026 ແມ່ນອີງໃສ່ຕາມຈຳນວນຮຸ້ນທີ່ໄດ້ຊຳລະແລ້ວ.

## 22. ພາລະຜູກພັນ

| | 31 ມີນາ 2026 ລ້ານກີບ | 31 ທັນວາ 2025 ລ້ານກີບ |
|---|---|---|
| ໜັງສືຄ້ຳປະກັນຂອງທະນາຄານ | 387,538 | 369,931 |

## 23. ເຫດການທີ່ເກີດຂຶ້ນຫລັງມື້ລາຍງານ

ມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ທະນາຄານຮ່ວມພັດທະນາ ມະຫາຊົນ ປະຈຳປີ 2025 ນະວັນທີ 29 ເມສາ 2026, ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາແຜນເພີ່ມທຶນຈົດທະບຽນໂດຍການນຳໃຊ້ສ່ວນເພີ່ມມູນຄ່າຮຸ້ນ (Share Premium) ເພື່ອອອກຮຸ້ນລາງວັນ (Bonus Issue) ໃຫ້ແກ່ຜູ້ຖືຮຸ້ນເດີມຂອງ ທຄຮ ລາຍລະອຽດດັ່ງນີ້:

| | |
|---|---|
| ທຶນຈົດທະບຽນເດີມ: | 750,000,000,000 ກີບ |
| Share premium: | 568,616,128,596 ກີບ |
| ສ່ວນເພີ່ມມູນຄ່າຮຸ້ນທີ່ນຳໃຊ້ເພີ່ມທຶນ: | 375,000,000,000 ກີບ |
| ທຶນຈົດທະບຽນ ຈະເພີ່ມເປັນ: | 1,125,000,000,000 ກີບ |
| ຈຳນວນຮຸ້ນປັນຜົນທີ່ອອກໃໝ່ທັງໝົດ: | 375,000,000 ຮຸ້ນ |
| ສັດສ່ວນການຈັດສັນຮຸ້ນລາງວັນ: | 2 ຮຸ້ນເດີມຕໍ່ 1 ຮຸ້ນໃໝ່ (2:1) |